ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ

ເລກທີ 838 /ຫສນຍ

ນະຄອນຫຼວງວຽງຈັນ, ວັນທີ 7.8.2020

ດ່ວນທີ່ສຸດ

## ແຈ້ງການ

**ຮຽນ:** - ບັນດາ ທ່ານ ລັດຖະມົນຕີ, ຫົວໜ້າອົງການທຽບເທົ່າ ທີ່ນັບຖື.

- ທ່ານ ເຈົ້າຄອງນະຄອນຫຼວງວຽງຈັນ ແລະ ບັນດາທ່ານ ເຈົ້າແຂວງທົ່ວປະເທດ.

**ເລື່ອງ:** ທິດຊີ້ນຳເພີ່ມເຕີມ ກ່ຽວກັບການສືບຕໍ່ເພີ່ມທະວີການປະຕິບັດບັນດາມາດຕະການຜ່ອນຜັນ, ປ້ອງກັນ, ຄວບຄວບຄຸມ, ສະກັດກັ້ນ ແລະ ແກ້ໄຂການລະບາດ ຂອງພະຍາດ COVID-19.

- ອີງຕາມຄຳສັ່ງ ຂອງທ່ານ ນາຍົກລັດຖະມົນຕີ ສະບັບເລກທີ 06/ນຍ, ລົງວັນທີ 29 ມິຖຸນາ 2020.
- ອີງຕາມການລາຍງານ ການຈັດຕັ້ງປະຕິບັດບັນດາມາດຕະການປ້ອງກັນ, ຄວບຄຸມ, ສະກັດກັ້ນ ແລະ ແກ້ໄຂການລະບາດຂອງພະຍາດ COVID-19 ໃນໄລຍະຜ່ານມາ.
- ອີງຕາມທິດຊີ້ນຳຂອງທ່ານ ນາຍົກລັດຖະມົນຕີ ໃນກອງປະຊຸມປຶກສາຫາລື ມາດຕະການຜ່ອນຜັນ ກັບ ສສ ຫວຽດນາມ ແລະ ສປ ຈີນ ດັ່ງວັນທີ 05 ສິງຫາ 2020.

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ຂໍຖືເປັນກຽດແຈ້ງມາຍັງທ່ານ ຊາບດັ່ງນີ້: **ໃນສະພາບປະຈຸບັນ ເຫັນວ່າຍັງມີຄວາມສ່ຽງ ແລະ ສິ່ງທ້າທາຍ ທີ່ອາດຈະເກີດມີການລະບາດຂອງພະຍາດ COVID-19 ຂຶ້ນອີກຮອບໃໝ່ ຍ້ອນສະພາບການລະບາດຢູ່ໃນພາກພື້ນ ແລະ ໃນໂລກ ຍັງສືບຕໍ່ເພີ່ມຂຶ້ນ. ສະນັ້ນ, ຈຶ່ງມີຄວາມຈຳເປັນຕ້ອງໄດ້ເພີ່ມທະວີການປະຕິບັດມາດຕະການຈຳນວນໜຶ່ງ ໃຫ້ເຂັ້ມງວດກວ່າເກົ່າ ເພື່ອປ້ອງກັນບໍ່ໃຫ້ມີການລະບາດຂອງພະຍາດ COVID-19 ຢູ່ລາວອີກຮອບໃໝ່, ມອບໃຫ້ຄະນະສະເພາະກິດ COVID-19, ຂະແໜງການກ່ຽວຂ້ອງ ແລະ ທ້ອງຖິ່ນ ສືບຕໍ່ປະຕິບັດຢ່າງເຂັ້ມງວດບັນດາມາດຕະການທີ່ໄດ້ກຳນົດໄວ້ ໃນແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 806/ຫສນຍ, ລົງວັນທີ 29 ກໍລະກົດ 2020 ແລະ ໃຫ້ເອົາໃຈໃສ່ຕື່ມ ດັ່ງນີ້:**

1. ມອບໃຫ້ກະຊວງປ້ອງກັນຄວາມສະຫງົບ ສົມທົບກັບຄະນະສະເພາະກິດ ຂັ້ນທ້ອງຖິ່ນ ເພີ່ມທະວີການກວດກາຄົນເຂົ້າ-ອອກເມືອງ ຢ່າງເຂັ້ມງວດ, ກໍລະນີພົບເຫັນຜູ້ລັກລອບເຂົ້າເມືອງ ແບບບໍ່ຖືກຕ້ອງ ແມ່ນໃຫ້ນຳຕົວໄປກວດຫາເຊື້ອ ແລ້ວກັກບໍລິເວນຢູ່ສູນທີ່ລັດກຳນົດ, ທັງໃຫ້ດຳເນີນມາດຕະການຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງກຳນົດ. ພ້ອມກັນນັ້ນ ກໍໃຫ້ປະກາດອອກຂ່າວສູ່ສັງຄົມ ເພື່ອຮັບຊາບຢ່າງກວ້າງຂວາງກ່ຽວກັບຜູ້ທີ່ລັກລອບເຂົ້າເມືອງນັ້ນ.

2. ມອບໃຫ້ກະຊວງປ້ອງກັນຄວາມສະຫງົບ ສົມທົບກັບນະຄອນຫຼວງວຽງຈັນ, ບັນດາແຂວງທົ່ວປະເທດ ແລະ ພາກສ່ວນກ່ຽວຂ້ອງ ຕິດຕາມ ແລະ ກວດກາບັນດາຮ້ານບັນເທີງ ແລະ ຮ້ານຄາຣາໂອເກະ ທີ່ລັດຖະບານ ໄດ້ສັ່ງໃຫ້ປິດຊົ່ວຄາວແລ້ວນັ້ນ, ຖ້າຫາກພົບເຫັນວ່າ ຮ້ານໃດ ຍັງລະເມີດ ແລະ ບໍ່ປະຕິບັດຕາມຄຳສັ່ງຂອງລັດຖະບານ ແມ່ນໃຫ້ດຳເນີນການຕັກເຕືອນ, ປັບໃໝ ຫາກຍັງມີການຝ່າຝືນຢູ່ ແມ່ນໃຫ້ດຳເນີນການລົບລ້າງໃບອະນຸຍາດການດຳເນີນທຸລະກິດ ແລະ ລົບລ້າງໃບທະບຽນວິສາຫະກິດ ຕາມຂັ້ນຕອນ.

3. ໃຫ້ກະຊວງການຕ່າງປະເທດ ສົມທົບກັບຄະນະສະເພາະກິດ COVID-19 ແລະ ພາກສ່ວນກ່ຽວຂ້ອງ ສືບຕໍ່ກະກຽມຄວາມພ້ອມ ໃນການປະຕິບັດຊ່ອງທາງສີຂຽວ (Fast Track) ກັບ ສສ ຫວຽດນາມ ແລະ ສປ ຈີນ.

4. ໃຫ້ຄະນະສະເພາະກິດ, ອົງການປົກຄອງທ້ອງຖິ່ນທຸກຂັ້ນ ແລະ ພາກສ່ວນກ່ຽວຂ້ອງ ສືບຕໍ່ເພີ່ມທະວີການໂຄສະນາ, ປະຊາສຳພັນ ແລະ ເຜີຍແຜ່ ໃຫ້ປະຊາຊົນໄດ້ຮັບຮູ້ເຖິງຄວາມອັນຕະລາຍ ແລະ ຄວາມສ່ຽງທີ່ຈະເກີດມີການລະບາດຂອງພະຍາດ COVID-19 ອີກຮອບໃໝ່, ພ້ອມທັງ ເປັນເຈົ້າການ ແລະ ມີສະຕິໃນການປະຕິບັດມາດຕະການປ້ອງກັນ ແລະ ຄວບຄຸມການລະບາດຂອງພະຍາດດັ່ງກ່າວ ຕາມຄຳແນະນຳຂອງຄະນະສະເພາະກິດ ວາງອອກໃນແຕ່ລະໄລຍະ ເພື່ອປ້ອງກັນຕົນເອງ, ຄອບຄົວ, ສັງຄົມ ແລະ ປະເທດຊາດ ໃຫ້ປອດຈາກການຕິດເຊື້ອຂອງພະຍາດ COVID-19, ພ້ອມກັນນັ້ນ ກໍໃຫ້ໂຄສະນາ ແລະ ເຜີຍແຜ່ການປະຕິບັດໜ້າທີ່ຂອງຄະນະສະເພາະກິດ ເພື່ອໃຫ້ສັງຄົມຮັບຮູ້ ແລະ ເຂົ້າໃຈຢ່າງທົ່ວເຖິງ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ປະຕິບັດຕາມເນື້ອໃນແຈ້ງການສະບັບນີ້ດ້ວຍ.

ລັດຖະມົນຕີ,
ຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ

ເພັດ ພົມພິພັກ

ບ່ອນນຳສົ່ງ:

| | |
|---|---|
| 1. ນາຍົກ-ຮອງນາຍົກລັດຖະມົນຕີ | 04 ສະບັບ |
| 2. ຫ້ອງວ່າການສູນກາງພັກ | 01 ສະບັບ |
| 3. ບັນດາສະມາຊິກລັດຖະບານ, ທ່ານລະ | 01 ສະບັບ |
| 4. ອົງການຈັດຕັ້ງພັກ, ບ່ອນລະ | 01 ສະບັບ |
| 5. ສູນກາງແນວລາວສ້າງຊາດ | 01 ສະບັບ |
| 6. ອົງການຈັດຕັ້ງມະຫາຊົນ, ບ່ອນລະ | 01 ສະບັບ |
| 7. ສຳເນົາ | 01 ສະບັບ |